# ຊາວໜຸ່ມທະນາຄານແຫ່ງ ສປປ ລາວ ທັດສະນະສຶກສາຢູ່ແຂວງຊຽງຂວາງ





ເພື່ອເປັນການເພີ່ມພູນຄູນສ້າງນໍ້າໃຈຮັກເຊື້ອ-ແພງຊາດຂອງປະຊາຊົນລາວບັນດາເຜົ່າ ໂດຍສະເພາະຕໍ່ຊາວຊຽງຂວາງວິລະຊົນ ຜູ້ທີ່ມີນໍ້າໃຈສູ້ຊົນ ອົດທົນຜ່ານຜ່າ ແລະ ໄດ້ປະກອບສ່ວນອັນສົມກຽດເຂົ້າໃນໄຊຊະນະລວມຂອງການປະຕິວັດລາວ.

ສະນັ້ນ, ຢາກໄປໜ້າຕ້ອງຫຼຽວແລຫຼັງ, ຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ ເຊິ່ງນໍາໂດຍສະຫາຍ ດຣ ອາຄົມ ປຣະເສີດ ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍສະມາຊິກຊາວໜຸ່ມທະນາຄານແຫ່ງ ສປປ ລາວ ແລະ ຊາວໜຸ່ມກອງທັບປະຊາຊົນລາວ ໄດ້ເດີນທາງໄປທັດສະນະສຶກສາຢູ່ແຂວງຊຽງຂວາງ ອະດີດສະໜໍລະພູມຮົບທີ່ດຸເດືອດ-ຍາວນານຕ້ານກັບພວກຣຸກຮານ.

ຄະນະຊາວໜຸ່ມທະນາຄານແຫ່ງ ສປປປ ລາວ ໄດ້ມີການຕ້ອນຮັບຢ່າງອົບອຸ່ນຈາກສະຫາຍ ພັນໂທ ຂັນທອງ ຮອງຫົວໜ້າຫ້ອງການເມືອງ ກອງບັນຊາການທະຫານແຂວງຊຽງຂວາງ ພ້ອມດ້ວຍຊາວໜຸ່ມທະຫານແຂວງດັ່ງກ່າວ, ຈາກນັ້ນຄະນະຊາວໜຸ່ມກໍ່ໄດ້ເດີນທາງເຂົ້າທົ່ງວຊົມທົ່ງໄຫຫີນ ເຊິ່ງໄດ້ສະເໜີເປັນມໍລະດົກໂລກແຫ່ງທີ່ສາມຂອງລາວ, ຖັດນັ້ນມາກໍ່ໄດ້ເດີນທາງເຂົ້າສູ່ຖໍ້າປີວເມືອງຄໍາ ດິນແດນວິລະຊົນເຊິ່ງໃນປາງສົງຄາມພວກຣຸກຮານໄດ້ນໍາໃຊ້ເຄື່ອງບິນຍິງລູກລະເບີດເຄມີໃສ່ຖໍ້າດັ່ງກ່າວ ເຮັດໃຫ້ປະຊາຊົນລາວຜູ້ບໍລິສຸດນັບທັງຜູ້ເຖົ້າ, ແມ່ຍິງ ແລະ ເດັກນອ້ຍໄດ້ລົ້ມຕາຍພາບດຽວ 374 ຄົນ ເຊິ່ງເຫດການດັ່ງກ່າວມັນຍັງໄດ້ຝັງຮາກເລິກຄວາມຄຽດແຄ້ນຢູ່ໃນດວງໃຈຂອງປະຊາຊົນລາວບັນດາເຜົ່າ.

ໃນເວລາຕໍ່ມາຄະນະຊາວໜຸ່ມທະນາຄານແຫ່ງ ສປປ ລາວ ກໍໄດ້ມອບເຄື່ອງກິລາ, ປື້ມຊຽນ ແລະເງິນຈໍານວນໜຶ່ງໃຫ້ແກ່ຄະນະນໍາທະຫານແຂວງຊຽງຂວາງ ເພື່ອເປັນການປະກອບສ່ວນເຂົ້າໃນກໍ່ສ້າງແລະ ປັບປຸງກົມກອງໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ກາຍເປັນກໍາລັງຈິງຮັກພັກດີຕໍ່ພັກ ແລະ ສືບຕໍ່ປົກປັກຮັກສາເຂດນໍ້າແດນດິນຊຽງຂວາງອັນແສນຮັກໄວ້ຕາບນານແສນນານ.